**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເລກທີ 8056/ກຊສ

ນະຄອນຫຼວງວຽງຈັນ, ວັນທີ 17 ທັນວາ 2013

# ຂໍ້ຕົກລົງ

## ວ່າດ້ວຍ ການຮັບຮອງ ແລະ ປະກາດໃຊ້ ບັນຊີໂຄງການລົງທຶນ ແລະ ກິດຈະການຕ່າງໆ ທີ່ຈະຕ້ອງດຳເນີນ ການສຶກສາເບື້ອງຕົ້ນກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ ຫລື ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ

- ອີງຕາມ ມາດຕາ 21 ແລະ ມາດຕາ 22 ຂອງ ກົດໝາຍ ວ່າດ້ວຍ ການປົກປັກຮັກສາສິ່ງແວດລ້ອມ (ສະບັບປັບປຸງ) ເລກທີ 29/ສພຊ, ລົງວັນທີ 18 ທັນວາ 2012;
- ອີງຕາມດຳລັດ ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ສະບັບ ເລກທີ 435/ນຍ, ລົງວັນທີ 28 ພະຈິກ 2011;
- ອີງຕາມຄຳແນະນຳ ຂະບວນການສຶກສາເບື້ອງຕົ້ນ ກ່ຽວກັບ ຜົນກະທົບຕໍ່ສິ່ງແວດລ້ອມ ຂອງ ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ສະບັບ ເລກທີ 8029/ກຊສ, ລົງວັນທີ 17 ທັນວາ 2013;
- ອີງຕາມຄຳແນະນຳ ຂະບວນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ຂອງ ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ສະບັບ ເລກທີ 8030/ກຊສ, ລົງວັນທີ 17 ທັນວາ 2013;

ລັດຖະມົນຕີ ວ່າການ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຕົກລົງ:

ມາດຕາ 1. ຮັບຮອງ ແລະ ປະກາດໃຊ້ ບັນຊີໂຄງການລົງທຶນ ຫລືກິດຈະການຕ່າງໆ ທີ່ຈະຕ້ອງດຳເນີນການສຶກສາເບື້ອງຕົ້ນກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ ຫລື ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ (ສະບັບປັບປຸງ).

ມາດຕາ 2. ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງຕ່າງໆທີ່ກ່ຽວຂ້ອງ ທັງພາກລັດ ແລະ ເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ ຢູ່ໃນ ສປປ ລາວ ຕ້ອງໄດ້ເອົາໃຈໃສ່ ແລະ ປະຕິບັດ ຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ ແລະ ມີປະສິດທິຜົນ.

ມາດຕາ 3. ມອບໝາຍໃຫ້ ກອງປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນໃຈກາງປະສານສົມທົບ ກັບທຸກພາກສ່ວນທີ່ກ່ຽວຂ້ອງ ເປັນຜູ້ຮັບຜິດຊອບຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ໃຫ້ປະກົດຜົນເປັນຈິງ.

ມາດຕາ 4. ຫ້ອງການ, ກົມ, ສະຖາບັນ, ກອງ ແລະ ສູນ ອ້ອມຂ້າງ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ລວມທັງ ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນທ້ອງຖິ່ນ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ທັງພາກລັດ ແລະ ເອກະຊົນ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

ມາດຕາ 5. ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນ ທີ່ລົງລາຍເຊັນ ເປັນຕົ້ນໄປ ແລະ ປ່ຽນແທນ ຂໍ້ຕົກລົງວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ ບັນຊີໂຄງການລົງທຶນ ທີ່ຈະຕ້ອງດຳເນີນການສຶກສາສິ່ງແວດລ້ອມເບື້ອງຕົ້ນ ແລະ ດຳເນີນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ສະບັບເລກທີ 697/ສນຍ.ອຊນສ, ລົງວັນທີ 12 ມີນາ 2010.

**ລັດຖະມົນຕີ ວ່າການ**

**ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ**

**ນູລິນ ສິນບັນດິດ**

**ບັນຊີໂຄງການລົງທຶນ ແລະ ກິດຈະການຕ່າງໆ**
**ທີ່ຈະຕ້ອງດໍາເນີນ ການສຶກສາເບື້ອງຕົ້ນກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ ຫລື**
**ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທໍາມະຊາດ**

ບັນຊີໂຄງການລົງທຶນ ແລະ ກິດຈະການຕ່າງໆ ປະກອບດ້ວຍ ປະເພດ ແລະ ຂະໜາດ ໂຄງການລົງທຶນ ແລະ ກິດຈະການຕ່າງໆ ຊຶ່ງໂດຍຫລັກໄດ້ຈັດແບ່ງອອກເປັນ 2 ກຸ່ມ ຄື: ກຸ່ມ 1 ຕ້ອງສ້າງບົດລາຍງານການສຶກສາເບື້ອງຕົ້ນກ່ຽວກັບ ຜົນກະທົບຕໍ່ສິ່ງແວດລ້ອມ (ບສຕສ) ແລະ ກຸ່ມ 2 ຕ້ອງສ້າງບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທໍາມະຊາດ (ບປຜສ) (ຍົກເວັ້ນສໍາລັບໂຄງການລົງທຶນ ແລະ ກິດຈະການຕ່າງໆ ທີ່ຕົກຢູ່ໃນກໍລະນີ ທີ່ລະບຸໄວ້ໃນ ຫມາຍເຫດ ຢູ່ກ້ອງຕາຕະລາງ ລຸ່ມນີ້).

ໂຄງການລົງທຶນ ແລະ ກິດຈະການຕ່າງໆ ໄດ້ຈັດແບ່ງອອກເປັນ 5 ຂະແໜງຄື: (1) ຂະແໜງພະລັງງານ; (2) ຂະແໜງກະສິກໍາ ແລະ ປ່າໄມ້; (3) ຂະແໜງອຸດສາຫະກໍາປຸງແຕ່ງ; (4) ຂະແໜງພື້ນຖານໂຄງລ່າງ ແລະ ບໍລິການ; ແລະ (5) ຂະແໜງແຮ່ທາດ.

ລາຍລະອຽດກ່ຽວກັບປະເພດ ແລະ ຂະໜາດ ໂຄງການລົງທຶນ ແລະ ກິດຈະການຕ່າງໆ ໃນແຕ່ລະຂະແໜງ ທີ່ໄດ້ຈັດເຂົ້າໃນກຸ່ມ 1 ແລະ ກຸ່ມ 2 ແມ່ນໄດ້ກໍານົດໄວ້ໃນຕາຕະລາງ ລຸ່ມນີ້:

| ປະເພດໂຄງການລົງທຶນ ແລະ ກິດຈະການຕ່າງໆ | | ກຸ່ມ 1<br>ຕ້ອງສ້າງ ບສຕສ | ກຸ່ມ 2<br>ຕ້ອງສ້າງ ບປຜສ |
|---|---|---|---|
| I. ໂຄງການລົງທຶນ ແລະ ກິດຈະການຕ່າງໆ ໃນຂະແໜງພະລັງງານ | | | |
| ການພັດທະນາທາງດ້ານພະລັງງານໄຟຟ້າ | | | |
| 1.1 | ການຜະລິດໄຟຟ້າດ້ວຍພະລັງງານ ນໍ້າຕົກ (ສ້າງເຂື່ອນໄຟຟ້ານໍ້າຕົກ) | (ກ) 1-15 ເມກາວັດ ຫລື<br>(ຂ) ບັນຈຸບໍລິມາດນໍ້າ < 200 ລ້ານ ມ$^3$ ຫລື<br>(ຄ) ມີເນື້ອທີ່ອ່າງເກັບ ນໍ້າ <1.500 ເຮັກຕາ | (ກ) ≥ 15 ເມກາວັດ ຫລື<br>(ຂ) ບັນຈຸບໍລິມາດນໍ້າ ≥ 200 ລ້ານ ມ$^3$ ຫລື<br>(ຄ) ມີເນື້ອທີ່ອ່າງເກັບ ນໍ້າ ≥ 1.500 ເຮັກຕາ |
| 1.2 | ການຜະລິດໄຟຟ້າດ້ວຍພະລັງງານ ນິວເຄຍ, ການຄຸ້ມຄອງ ແລະ ການກໍາຈັດສິ່ງເສດເຫລືອນິວເຄຍ | | ທຸກຂະໜາດ |
| 1.3 | ການຜະລິດໄຟຟ້າດ້ວຍພະລັງງານຈາກອາຍແກັສທໍາມະຊາດ | 5-50 ເມກາວັດ | > 50 ເມກາວັດ |
| 1.4 | ການຜະລິດໄຟຟ້າດ້ວຍພະລັງງານລົມ | 2-10 ໜ່ວຍກັງຫັນ | > 10 ໜ່ວຍກັງຫັນ |

| ປະເພດໂຄງການລົງທຶນ ແລະ ກິດຈະການຕ່າງໆ | | ກຸ່ມ 1<br>ຕ້ອງສ້າງ ບສຕສ | ກຸ່ມ 2<br>ຕ້ອງສ້າງ ບປຜສ |
|---|---|---|---|
| | ໂດຍນຳໃຊ້ກັງຫັນລົມ | | |
| 1.5 | ການຜະລິດໄຟຟ້າດ້ວຍພະລັງງານຄວາມຮ້ອນ | ≤ 10 ເມກາວັດ | > 10 ເມກາວັດ |
| ການພັດທະນາທາງດ້ານພະລັງງານອາຍແກັສ ແລະ ນ້ຳມັນເຊື້ອໄຟ | | | |
| 1.6 | ການພັດທະນາທໍ່ຂົນສົ່ງນ້ຳມັນ ແລະ ອາຍແກັສ | | ທຸກຂະໜາດ |
| 1.7 | ການຂຸດຄົ້ນນ້ຳມັນເຊື້ອໄຟ ຫລືອາຍແກັສທຳມະຊາດ | | ທຸກຂະໜາດ |
| 1.8 | ການກັ່ນນ້ຳມັນ | | ທຸກຂະໜາດ |
| 1.9 | ການສ້າງສາງເກັບນ້ຳມັນ | 5,000-50.000 ມ$^{3}$ | > 50.000 ມ$^{3}$ |
| ການພັທະນາທາງດ້ານລະບົບສາຍສົ່ງໄຟຟ້າແຮງສູງ | | | |
| 1.10 | ການກໍ່ສ້າງສາຍສົ່ງໄຟຟ້າແຮງສູງ: | | |
| 1.10.1 | ໄຟຟ້າແຮງສູງ ≥ 230 ກິໂລໂວນ | ≤ 15 ກິໂລແມັດ | > 15 ກິໂລແມັດ |
| 1.10.2 | ໄຟຟ້າແຮງສູງ < 230 ກິໂລໂວນ | ທຸກຂະໜາດ | |
| 1.11 | ສະຖານີໄຟຟ້າແຮງສູງ | < 10 ເຮັກຕາ | ≥ 10 ເຮັກຕາ |
| II. ໂຄງການລົງທຶນ ແລະ ກິດຈະການຕ່າງໆ ໃນຂະແໜງກະສິກຳ ແລະ ປ່າໄມ້ | | | |
| ການປູກໄມ້ ແລະ ປູກພືດ | | | |
| 2.1 | ການປູກ ແລະ ຕັດໄມ້ ອຸດສາຫະກຳ | 20-200 ເຮັກຕາ | > 200 ເຮັກຕາ |
| 2.2 | ການປູກພືດອຸດສາຫະກຳ | 20-400 ເຮັກຕາ | > 400 ເຮັກຕາ |
| ການລ້ຽງສັດ ແລະ ການປະມົງ | | | |
| 2. 3 | ການລ້ຽງສັດໃຫຍ່ ເຊັ່ນ: ງົວ, ຄວາຍ, ມ້າ ແລະ ອື່ນໆ | ≥ 500 ໂຕ | |

| ປະເພດໂຄງການລົງທຶນ ແລະ ກິດຈະການຕ່າງໆ | | ກຸ່ມ 1<br>ຕ້ອງສ້າງ ບສຕສ | ກຸ່ມ 2<br>ຕ້ອງສ້າງ ບປຜສ |
|---|---|---|---|
| 2.4 | ການລ້ຽງສັດປີກ | ≥ 5.000 ໂຕ | |
| 2.5 | ການລ້ຽງໝູ | ≥ 500 ໂຕ | |
| 2.6 | ການລ້ຽງປາ ແລະ ສັດນ້ຳ ໃນໜອງນ້ຳແບບອຸດສາຫະກຳ | ≥ 10 ເຮັກຕາ | |
| 2.7 | ການລ້ຽງປາ ແລະ ສັດນ້ຳ ໃນກະຊັງຕາມລຳແມ່ນ້ຳ | ≥ 300 ຕາແມັດ | |
| 2.8 | ການລ້ຽງແຂ້ | ≥ 100 ໂຕ | |
| III. ໂຄງການລົງທຶນ ແລະ ກິດຈະການຕ່າງໆ ໃນຂະແໜງອຸດສາຫະກຳປຸງແຕ່ງ | | | |
| ອຸດສາຫະກຳປຸງແຕ່ງອາຫານ | | | |
| 3.1 | ການຜະລິດ, ການປຸງແຕ່ງ ແລະ ການຮັກສາອາຫານ (ຊີ້ນ, ປາ,ໝາກໄມ້, ນ້ຳມັນຈາກພືດ ແລະ ສັດ ແລະ ອາຫານສັດ) | ≤ 1 ໂຕນ/ມື້ | > 1 ໂຕນ/ມື້ |
| 3.2 | ໂຮງງານດຳເນີນກິດຈະການ ກ່ຽວກັບຜະລິດພັນຈາກນົມ | ≤ 40 ໂຕນ/ມື້ | > 40 ໂຕນ/ມື້ |
| 3.3 | ໂຮງງານດຳເນີນກິດຈະການ ກ່ຽວກັບແປ້ງ ແລະ ຜະລິດຕະພັນ ຈາກແປ້ງ | 40-80 ໂຕນ/ມື້ | > 80 ໂຕນ/ມື້ |
| 3.4 | ໂຮງງານດຳເນີນກິດຈະການ ກ່ຽວກັບນ້ຳຕານ | ≤ 30 ໂຕນ/ມື້ | > 30 ໂຕນ/ມື້ |
| 3.5 | ໂຮງງານດຳເນີນກິດຈະການ ກ່ຽວກັບເຫລົ້າ | ≤ 5 ແສນລິດ/ປີ | > 5 ແສນລິດ/ປີ |

| ປະເພດໂຄງການລົງທຶນ ແລະ ກິດຈະການຕ່າງໆ | | ກຸ່ມ 1<br>ຕ້ອງສ້າງ ບສຕສ | ກຸ່ມ 2<br>ຕ້ອງສ້າງ ບປຜສ |
|---|---|---|---|
| 3.6 | ໂຮງງານດຳເນີນກິດຈະການ ກ່ຽວກັບ ນ້ຳດື່ມບໍ່ມີທາດເຫລົ້າ ແລະ ນ້ຳດື່ມ ອະນາໄມ | ທຸກຂະໜາດ | |
| 3.7 | ໂຮງງານດຳເນີນກິດຈະການ ກ່ຽວກັບ ຜະລິດຕະພັນຢາສູບ | ທຸກຂະໜາດ | |
| ອຸດສາຫະກຳແຜ່ນແພ, ແຜ່ນເຈ້ຍ ແລະ ຜະລິດຕະພັນໄມ້ | | | |
| 3.8 | ໂຮງງານດຳເນີນກິດຈະການ ກ່ຽວກັບ ແຜ່ນແພ, ເສັ້ນດ້າຍແບບອຸດສາຫະ ກຳ, ເຄື່ອງນຸ່ງຫົ່ມ ແລະ ຍ້ອມສີຂົນສັດ | ທຸກຂະໜາດ | |
| 3.9 | ໂຮງງານດຳເນີນກິດຈະການ ກ່ຽວກັບ ການເອືອບ ແລະ ນວດໜັງ | ທຸກຂະໜາດ | |
| 3.10 | ໂຮງງານດຳເນີນກິດຈະການ ກ່ຽວກັບ ຜະລິດຕະພັນໜັງ | ≤ 1 ລ້ານອັນ/ປີ | > 1 ລ້ານອັນ/ປີ |
| 3.11 | ໂຮງງານດຳເນີນກິດຈະການ ກ່ຽວກັບ ຜະລິດຕະພັນໄມ້ຫວາຍ ແລະ ວັດຖຸ ຈັກສານ | ທຸກຂະໜາດ | |
| 3.12 | ໂຮງງານດຳເນີນກິດຈະການ ກ່ຽວກັບ ໄມ້ປອກ, ໄມ້ບາງຟານ ເປັນແຜ່ນ ແລະ ອື່ນໆ | ≤ 1 ແສນຕາແມັດ/ປີ | > 1 ແສນຕາແມັດ/ປີ |
| 3.13 | ໂຮງງານດຳເນີນກິດຈະການ ກ່ຽວກັບ ເຈ້ຍ | ≤ 30 ໂຕນ/ມື້ | > 30 ໂຕນ/ມື້ |
| 3.14 | ໂຮງງານດຳເນີນກິດຈະການ ກ່ຽວກັບ ການພິມ | ທຸກຂະໜາດ | |

| ປະເພດໂຄງການລົງທຶນ ແລະ ກິດຈະການຕ່າງໆ | | ກຸ່ມ 1<br>ຕ້ອງສ້າງ ບສຕສ | ກຸ່ມ 2<br>ຕ້ອງສ້າງ ບປຜສ |
|---|---|---|---|
| ອຸດສາຫະກຳຜະລິດຕະພັນເຄມີ ແລະ ອຸປະກອນການແພດ | | | |
| 3.15 | ໂຮງງານດຳເນີນກິດຈະການ ກ່ຽວກັບ ນ້ຳມັນເຊື້ອໄຟ (ເປໂຕຣຽມ) ແລະ ໄຮໂດຣຄາຣ໌ບອນ | | ທຸກຂະໜາດ |
| 3.16 | ໂຮງງານດຳເນີນກິດຈະການ ກ່ຽວກັບ ຜະລິດຕະພັນເຄມີ | | ທຸກຂະໜາດ |
| 3.17 | ໂຮງງານດຳເນີນກິດຈະການຜະລິດ ຜະລິດຕະພັນການແພດ ແລະ ການຢາ ທີ່ນຳໃຊ້ຂະບວນການທາງເຄມີ ແລະ ຊີວະເຄມີ | | ທຸກຂະໜາດ |
| 3.18 | ໂຮງງານດຳເນີນກິດຈະການ ກ່ຽວກັບ ວັດຖຸພັນອະນາໄມ, ລ້າງຂັດຖູ ແລະ ເຄື່ອງສຳອາງ | ≤ 10 ໂຕນ/ມື້ | > 10 ໂຕນ/ມື້ |
| 3.19 | ໂຮງງານດຳເນີນກິດຈະການ ກ່ຽວກັບ ຢາງຍຶດ ແລະ ຢາງພາລາ | 50-200 ໂຕນ/ປີ | > 200 ໂຕນ/ປີ |
| 3.20 | ໂຮງງານດຳເນີນກິດຈະການ ກ່ຽວກັບ ຜະລິດຕະພັນ ປາລາສະຕິກ | ≤ 400 ໂຕນ/ປີ | > 400 ໂຕນ/ປີ |
| ອຸດສາຫະກຳຜະລິດຕະພັນແຮ່ທີ່ບໍ່ແມ່ນໂລຫະ | | | |
| 3.21 | ໂຮງງານດຳເນີນກິດຈະການ ກ່ຽວກັບ ແກ້ວ ແລະຜະລິດຕະພັນ ຈາກແກ້ວ | ທຸກຂະໜາດ | |
| 3.22 | ໂຮງງານດຳເນີນກິດຈະການ ກ່ຽວກັບ ຜະລິດຕະພັນແຮ່ ທີ່ບໍ່ແມ່ນໂລຫະອື່ນໆ | ທຸກຂະໜາດ | |

| ປະເພດໂຄງການລົງທຶນ ແລະ ກິດຈະການຕ່າງໆ | | ກຸ່ມ 1<br>ຕ້ອງສ້າງ ບສຕສ | ກຸ່ມ 2<br>ຕ້ອງສ້າງ ບປຜສ |
|---|---|---|---|
| 3.23 | ໂຮງງານດຳເນີນກິດຈະການ ກ່ຽວກັບ ຊີມັງ, ປູນຂາວ ແລະ ປູນໂບກ (Plaster) | ≤ 20 ໂຕນ/ຊົ່ວໂມງ | > 20 ໂຕນ/ຊົ່ວໂມງ |
| ອຸດສາຫະກຳແຍກໂລຫະອອກຈາກແຮ່ | | | |
| 3.24 | ໂຮງງານດຳເນີນກິດຈະການ ກ່ຽວກັບ ເຫລັກຂັ້ນຕົ້ນ, ເຫລັກ ແລະ ເຫລັກປຸງແຕ່ງ | ≤ 5.000 ໂຕນ/ປີ | > 5.000 ໂຕນ/ປີ |
| 3.25 | ໂຮງງານດຳເນີນກິດຈະການ ກ່ຽວກັບ ການຫລໍ່ຫລອມຮີດດຶງໂລຫະປະເສີດ ຂັ້ນຕົ້ນ ແລະ ໂລຫະທີ່ບໍ່ແມ່ນທາດເຫລັກ | | ທຸກຂະໜາດ |
| 3.26 | ການຫລໍ່ຫລອມຮີດດຶງເຫລັກ ແລະ ເຫລັກກ້າ | ≤ 50 ໂຕນ/ມື້ | > 50 ໂຕນ/ມື້ |
| 3.27 | ການຫລໍ່ຫລອມຮີດດຶງໂລຫະ ທີ່ບໍ່ແມ່ນທາດເຫລັກ | ທຸກຂະຫນາດ | |
| 3.28 | ໂຮງງານດຳເນີນກິດຈະການ ກ່ຽວກັບ ໂຄງປະກອບຜະລິດຕະພັນ ໂລຫະ, ຖັງ , ອ່າງ | ທຸກຂະຫນາດ | |
| 3.29 | ໂຮງງານດຳເນີນກິດຈະການ ກ່ຽວກັບ ໝໍ້ກຳເນີດໄຟ | ທຸກຂະຫນາດ | |
| ອຸດສາຫະກຳອື່ນໆ | | | |
| 3.30 | ໂຮງງານດຳເນີນກິດຈະການ ກ່ຽວກັບ ເຄື່ອງຮັບໃຊ້ ໃນບ້ານເຮືອນທົ່ວໄປ ອື່ນໆ ເຄື່ອງໃຊ້ຫ້ອງການ ແລະ ເຄື່ອງໃຊ້ໄຟຟ້າ | ທຸກຂະຫນາດ | |

| ປະເພດໂຄງການລົງທຶນ ແລະ ກິດຈະການຕ່າງໆ | | ກຸ່ມ 1<br>ຕ້ອງສ້າງ ບສຕສ | ກຸ່ມ 2<br>ຕ້ອງສ້າງ ບປຜສ |
|---|---|---|---|
| 3.31 | ໂຮງງານດຳເນີນກິດຈະການ ກ່ຽວກັບການຜະລິດໝໍ້ໄຟ ແລະ ຖ່ານໄຟສາຍ | ≤ 70 ໂຕນ/ປີ | > 70 ໂຕນ/ປີ |
| 3.32 | ໂຮງງານດຳເນີນກິດຈະການ ກ່ຽວກັບອາໄຫລ່ ແລະ ສິ້ນສ່ວນລົດຍົນ ແລະ ເຄື່ອງຈັກ ທີ່ກ່ຽວຂ້ອງ | ≤ 1.000 ໂຕນ/ປີ | > 1.000 ໂຕນ/ປີ |
| 3.33 | ໂຮງງານຜະລິດລົດຖີບ ແລະ ລໍ້ຮັບໃຊ້ຄົນພິການ | ≤ 10.000 ຄັນ/ປີ | > 10.000 ຄັນ/ປີ |
| 3.34 | ໂຮງງານດຳເນີນກິດຈະການ ກ່ຽວກັບເຄື່ອງເຮືອນ | ≤ 10.000 ອັນ/ປີ | > 10.000 ອັນ/ປີ |
| 3.35 | ໂຮງງານຜະລິດນໍ້າປະປາ | ທຸກຂະໜາດ | |
| ການຈັດການສິ່ງເສດເຫລືອ | | | |
| 3.36 | ການເກັບຮັກສາສິ່ງເສດເຫລືອ ທີ່ບໍ່ເປັນອັນຕະລາຍ | ≤≤ 5.000 ໂຕນ/ປີ | > 5.000 ໂຕນ/ປີ |
| 3.37 | ການເກັບຮັກສາສິ່ງເສດເຫລືອ ທີ່ເປັນອັນຕະລາຍ | | ທູກຂະໜາດ |
| 3.38 | ການກຳຈັດສິ່ງເສດເຫລືອ ທີ່ເປັນອັນຕະລາຍ | | ທຸກຂະໜາດ |
| 3.39 | ການບຳບັດ ແລະ ການບໍລິການຄຸ້ມຄອງສິ່ງເສດເຫລືອອື່ນໆ | | ທຸກຂະໜາດ |
| 3.40 | ການກໍ່ສ້າງໂຮງງານນຳໃຊ້ສິ່ງເສດເຫລືອຄືນໃຫມ່ | | ທຸກຂະໜາດ |

| ປະເພດໂຄງການລົງທຶນ ແລະ ກິດຈະການຕ່າງໆ | | ກຸ່ມ 1<br>ຕ້ອງສ້າງ ບສຕສ | ກຸ່ມ 2<br>ຕ້ອງສ້າງ ບປຜສ |
|---|---|---|---|
| 3.41 | ການກໍ່ສ້າງເຕົາເຜົາສິ່ງເສດເຫລືອ | | ທຸກຂະຫນາດ |
| 3.42 | ໂຮງບຳບັດນ້ຳເສຍຂອງຕົວເມືອງ | ≤ 50.000 ຄົນ | >50.000 ຄົນ |
| 3.43 | ໂຮງບຳບັດນ້ຳເສຍອຸດສາຫະກຳ | | ທຸກຂະຫນາດ |
| 3.44 | ການກໍ່ສ້າງຄອງລະບາຍນ້ຳເປື້ອນ | ທຸກຂະຫນາດ | |
| IV. ໂຄງການລົງທຶນ ແລະ ກິດຈະການຕ່າງໆ ໃນຂະແໜງພື້ນຖານໂຄງລ່າງ ແລະ ບໍລິການ | | | |
| 4.1 | ການຖົມບຶງ, ແມ່ນ້ຳ, ຄອງລະບາຍນ້ຳ ທີ່ຈະກໍ່ຄວາມເສຍຫາຍ ຕໍ່ ສາທາລະນະ | | ທຸກຂະຫນາດ |
| 4.2 | ການກໍ່ສ້າງເຮືອນພັກລວມຫມູ່, ບ້ານຈັດສັນ | >50 ຫ້ອງ | |
| 4.3 | ການກໍ່ສ້າງສະຫນາມກ໊ອບ | | ທຸກຂະໜາດ |
| 4.4 | ການກໍ່ສ້າງສະຫນາມກິລາ ຄົບວົງຈອນ | | ທຸກຂະຫນາດ |
| 4.5 | ການກໍ່ສ້າງໂຮງແຮມ ຫລື ສະຖານທີ່ພັກຕາກອາກາດ | ≤ 80 ຫ້ອງ | > 80 ຫ້ອງ |
| 4.6 | ການກໍ່ສ້າງໂຮງແຮມ ຄົບວົງຈອນ | ≤ 50 ເຮັກຕາ | > 50 ເຮັກຕາ |
| 4.7 | ການພັດທະນາບ່ອນທ່ອງທ່ຽວ ແລະ ບ່ອນພັກຜ່ອນ ໃນພື້ນທີ່ທີ່ມີຄວາມສຳຄັນທາງດ້ານສິ່ງແວດລ້ອມສັງຄົມ ແລະ ສິ່ງແວດລ້ອມທຳມະຊາດ | | ທຸກຂະຫນາດ |

| ປະເພດໂຄງການລົງທຶນ ແລະ ກິດຈະການຕ່າງໆ | | ກຸ່ມ 1<br>ຕ້ອງສ້າງ ບສຕສ | ກຸ່ມ 2<br>ຕ້ອງສ້າງ ບປຜສ |
|---|---|---|---|
| 4.8 | ການກໍ່ສ້າງ ແລະ ພັດທະນາເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ | | ທຸກຂະໜາດ |
| 4.9 | ການກໍ່ສ້າງໂຮງໜໍ | ≤ 80 ຕຽງ | > 80 ຕຽງ |
| 4.10 | ການກໍ່ສ້າງເສັ້ນທາງລົດໄຟ | | ທຸກຂະໜາດ |
| 4.11 | ການກໍ່ສ້າງເສັ້ນທາງໃຫມ່ (ເສັ້ນທາງຫລວງແຫ່ງຊາດ, ແຂວງ, ເມືອງ, ຊົນນະບົດ, ທາງຫລວງພິເສດ) | | ທຸກຂະໜາດ |
| 4.12 | ການປັບປຸງ ຫລື ຟື້ນຟູ ເສັ້ນທາງຫລວງແຫ່ງຊາດ, ແຂວງ, ເມືອງ, ຊົນນະບົດ, ທາງຫລວງພິເສດ | ທຸກຂະໜາດ | |
| 4.13 | ການກໍ່ສ້າງສະໜາມບິນ | | ທຸກຂະໜາດ |
| 4.14 | ການກໍ່ສ້າງຕາໜ່າງ ໂທລະຄົມມະ ນາຄົມ | ທຸກຂະໜາດ | |
| 4.15 | ການຄົມມະນາຄົມທາງນໍ້າ (ການປັບປຸງຄອງເດີນເຮືອ ຕາມລຳແມ່ນໍ້າຂອງ) | ≤ 200 ໂຕນ | > 200 ໂຕນ |
| 4.16 | ການກໍ່ສ້າງທ່າເຮືອ: | | |
| 4.16.1 | ທ່າເຮືອໂດຍສານ | ≤ 500 ໂຕນ (ບໍ່ລວມນໍ້າໜັກເຮືອ) | > 500 ໂຕນ (ບໍ່ລວມນໍ້າໜັກເຮືອ) |
| 4.16.2 | ທ່າເຮືອຂົນສົ່ງສິນຄ້າທົ່ວໄປ | ≤ 500 ໂຕນ (ບໍ່ລວມນໍ້າໜັກເຮືອ) | > 500 ໂຕນ (ບໍ່ລວມນໍ້າໜັກເຮືອ) |
| 4.16.3 | ທ່າເຮືອຂົນສົ່ງສິນຄ້າ ທີ່ເປັນອັນຕະລາຍ | | ທຸກຂະໜາດ |

| ປະເພດໂຄງການລົງທຶນ ແລະ ກິດຈະການຕ່າງໆ | | ກຸ່ມ 1<br>ຕ້ອງສ້າງ ບສຕສ | ກຸ່ມ 2<br>ຕ້ອງສ້າງ ບປຜສ |
|---|---|---|---|
| 4.17 | ການກໍ່ສ້າງປ້ອງກັນ ຕະຝັ່ງເຈື່ອນ | ≤ 1 ກິໂລແມັດ | >1 ກິໂລແມັດ |
| V. ໂຄງການລົງທຶນ ແລະ ກິດຈະການຕ່າງໆ ໃນຂະແໜງແຮ່ທາດ | | | |
| ການຂຸດຄົ້ນແລະປຸງແຕ່ງແຮ່ທາດ | | | |
| 5.1 | ການດູດຫີນ, ຊາຍ ຢູ່ໃນນໍ້າ | 1.000-50.000 ມ$^3$/ມື້ | > 50.000 ມ$^3$/ມື້ |
| 5.2 | ການຂຸດເຈາະຫີນ ແລະ ຂຶນຫີນ | ≤ 50 ໂຕນ/ມື້ | > 50 ໂຕນ/ມື້ |
| 5.3 | ການຂຸດຄົ້ນວັດຖຸດິບຮັບໃຊ້ ການກໍ່ສ້າງ (ດິນ, ຫີນ, ຊາຍ) ຢູ່ເທິງໜ້າດິນ | ≤ 100.000 ມ$^3$/ປີ ຫລື ພື້ນທີ່ ≤ 20 ຮຕ | > 100.000 ມ$^3$/ປີ ຫລືພື້ນທີ່ > 20 ຮຕ |
| 5.4 | ການຂຸດຄົ້ນແຮ່ທາດແຂງ (ໂດຍບໍ່ໄດ້ນໍາໃຊ້ສານເຄມີ) | | ທຸກຂະໜາດ |
| 5.5 | ການຂຸດຄົ້ນ ແລະ ປຸງແຕ່ງ ແຮ່ທາດ ທີ່ນໍາໃຊ້ສານເຄມີອັນຕະລາຍ | | ທຸກຂະໜາດ |
| 5.6 | ການປຸງແຕ່ງແຮ່ທາດແຂງ | ≤ 50.000 ໂຕນ/ປີ | > 50.000 ໂຕນ/ປີ |
| ການຈັດການ ແລະ ຄຸ້ມຄອງນໍ້າ | | | |
| 5.7 | ການຂຸດຄົ້ນ ແລະນໍາໃຊ້ນໍ້າໃຕ້ດິນ ເພື່ອການນໍາໃຊ້ທາງອຸດສາຫະກໍາ, ກະສິກໍາ ແລະ ການອຸປະໂພກໃນຕົວເມືອງ | 500- 5.000 ມ$^3$/ມື້ | > 5.000 ມ$^3$/ມື້ |
| 5.8 | ການກໍ່ສ້າງອ່າງເກັບນໍ້າ ແລະ ເຂື່ອນ | 1-200 ລ້ານ ມ$^3$ ຫລື ຄວາມສູງຂອງສັນເຂື່ອນ ≤ 10 ແມັດ | > 200 ລ້ານມ$^3$ ຫລື ຄວາມສູງຂອງສັນເຂື່ອນ > 10 ແມັດ |

**ໝາຍເຫດ:**

1. ສໍາລັບໂຄງການລົງທຶນ ແລະ ກິດຈະການຕ່າງໆ ໃດໜຶ່ງ ທີ່ປະກອບດ້ວຍຫລາຍໂຄງການຍ່ອຍທີ່ຕິດພັນກັບການສ້າງຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ຜົນກະທົບຕໍ່ສິ່ງແວດລ້ອມທໍາມະຊາດ ທີ່ສະເໜີພັດທະນາໃນຂອບເຂດພື້ນທີ່ດຽວກັນ ແລະ ໄດ້ສະເໜີຂໍອະນຸມັດການລົງທຶນເປັນໂຄງການດຽວ, (ເຊັ່ນ: ໂຄງການຜະລິດໄຟຟ້າດ້ວຍ

ພະລັງງານນ້ຳຕົກ ຊຶ່ງກວມເອົາ ກິດຈະກຳການກໍ່ສ້າງເຂື່ອນ, ສ້າງຖະໜົນຫົນທາງ, ສ້າງສາຍສົ່ງໄຟຟ້າ; ໂຄງການດຳເນີນກິດຈະການກ່ຽວກັບຜະລິດຕະພັນອ້ອຍ ຊຶ່ງກວມເອົາ ການປູກອ້ອຍ, ການສ້າງໂຮງງານປຸງແຕ່ງອ້ອຍ; ໂຄງການດຳເນີນກິດຈະການ ກ່ຽວກັບຜະລິດຕະພັນຢາງພະລາ ຊຶ່ງກວມເອົາ ການປູກຢາງພະລາ ແລະ ການສ້າງໂຮງງານປຸງແຕ່ງຢາງພະລາ ແລະ ອື່ນໆ), ຖ້າຕົກໃນກໍລະນີນີ້ ເຈົ້າຂອງໂຄງການຕ້ອງສ້າງ ບປຜສ ຢ່າງດຽວ ໂດຍບໍ່ພິຈາລະນາເຖິງຂະໜາດຂອງໂຄງການ ທັງນີ້ ຕ້ອງສ້າງເປັນບົດລາຍງານສະບັບດຽວ ທີ່ປະກອບດ້ວຍການປະເມີນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ສິ່ງແວດລ້ອມທຳມະຊາດ ຂອງທຸກກິດຈະກຳທີ່ກ່ຽວຂ້ອງຂອງໂຄງການ ເຂົ້າກັນ;

2. ສຳລັບໂຄງການລົງທຶນ ແລະ ກິດຈະການຕ່າງໆໃດໜຶ່ງ ທີ່ມີກິດຈະກຳແບບດຽວກັນ ແຕ່ພັດທະນາໃນຂອບເຂດພື້ນທີ່ແຕກຕ່າງກັນ, (ເຊັ່ນ: ໂຄງການກໍ່ສ້າງເສັ້ນທາງ, ການກໍ່ສ້າງສາຍສົ່ງໄຟຟ້າແຮງສູງ, ການປູກໄມ້ອຸດສາຫະກຳອື່ນໆ) ຊຶ່ງເຖິງແມ່ນວ່າ ຈະດຳເນີນກິດຈະກຳປະເພດດຽວກັນ ຫລືຂະໜາດດຽວກັນ ແລະ ໂດຍເຈົ້າຂອງໂຄງການດຽວກັນ ກໍ່ຕາມ, ຖ້າຕົກໃນກໍລະນີນີ້, ເຈົ້າຂອງໂຄງການ ຕ້ອງສ້າງ ບສຕສ ຫລື ບປຜສ ແລ້ວແຕ່ຂະໜາດຂອງໂຄງການ ທີ່ຈະຕົກຢູ່ໃນ ກຸ່ມ 1 ຫລື ກຸ່ມ 2 ໂດຍຕ້ອງສ້າງເປັນບົດລາຍງານສະເພາະ ສຳລັບແຕ່ລະຂົງເຂດພື້ນທີ່ ໝາຍວ່າບໍ່ໃຫ້ສ້າງເປັນບົດລາຍງານສະບັບດຽວ ໂດຍກວມເອົາຫລາຍພື້ນທີ່ແຕກຕ່າງກັນ, ຍົກເວັ້ນໃນບາງກໍລະນີ ຫາກໄດ້ຮັບການເຫັນດີຢັ້ງຢືນຂອງຂະແໜງການຊັບພະຍາກອນທຳມະຊາດແລະສິ່ງແວດລ້ອມໃນລະດັບທີ່ກ່ຽວຂ້ອງເສຍກ່ອນ;

3. ສຳລັບໂຄງການລົງທຶນ ແລະ ກິດຈະການຕ່າງໆ ທີ່ສະເໜີພັດທະນາໃນຂົງເຂດ ເຂດເສດຖະກິດພິເສດ ຫລື ເສດຖະກິດສະເພາະ, ນອກຈາກ ການສ້າງ ບປຜສ ສຳລັບກວມລວມຂອບເຂດທັງໝົດໃນຂົງເຂດ ເສດຖະກິດພິເສດ ຫລື ເສດຖະກິດສະເພາະ ໂດຍເຈົ້າຂອງເຂດດັ່ງກ່າວນັ້ນແລ້ວ ເຈົ້າຂອງໂຄງການຍ່ອຍແຕ່ລະໂຄງການລົງທຶນ ແລະ ກິດຈະການຕ່າງໆ ຍັງຈະຕ້ອງໄດ້ເຮັດການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ສະເພາະ ສຳລັບແຕ່ລະໂຄງການຍ່ອຍອີກແລ້ວແຕ່ແຕ່ລະປະເພດໂຄງການລົງທຶນ ແລະ ກິດຈະການຕ່າງໆ ທີ່ສະເໜີມານັ້ນ ວ່າຈະຕົກຢູ່ໃນປະເພດໂຄງການ ໃນກຸ່ມໃດ ຄື ຕົກຢູ່ໃນ ກຸ່ມ 1 ຕ້ອງສ້າງ ບສຕສ ແລະ ຖ້າຕົກໃນກຸ່ມ 2 ຕ້ອງສ້າງ ບປຜສ ໂດຍຕ້ອງປະຕິບັດໃຫ້ຖືກຕ້ອງ ແລະ ສອດຄ່ອງ ຕາມລະບຽບຫລັກການ ທີ່ກຳນົດໄວ້ໃນ ຄຳແນະນຳ ແລະ ບົດແນະນຳທາງດ້ານວິຊາການທີ່ກ່ຽວຂ້ອງ;

4. ສຳລັບໂຄງການລົງທຶນ ແລະ ກິດຈະການຕ່າງໆ ຖ້າຕົກຢູ່ໃນກໍລະນີ ເປັນໂຄງການທີ່ມີການທົດແທນຄ່າເສຍຫາຍ ແລະ ການຍົກຍ້າຍຈັດສັນປະຊາຊົນ ພາຍໃຕ້ຂໍ້ບັນຍັດທີ່ກຳນົດໄວ້ໃນ ດຳລັດວ່າດ້ວຍການທົດແທນຄ່າເສຍຫາຍ ແລະ ການຍົກຍ້າຍຈັດສັນປະຊາຊົນ ຈາກໂຄງການພັດທະນາ ສະບັບເລກທີ 192/ນຍ, ລົງວັນທີ 7/7/2005 ຫລື ນິຕິກຳອື່ນທີ່ປ່ຽນແທນ, ໂຄງການລົງທຶນ ແລະ ກິດຈະການຕ່າງໆນັ້ນ ຖືວ່າມີຄວາມຈຳເປັນ ຕ້ອງສ້າງ ບປຜສ ຢ່າງດຽວ ຊຶ່ງເຈົ້າຂອງໂຄງການ ຕ້ອງດຳເນີນ ໃຫ້ຖືກຕ້ອງ ແລະ ສອດຄ່ອງ ຕາມຂໍ້ບັນຍັດທີ່ກຳນົດໄວ້ໃນ ຄຳແນະນຳ ແລະ ບົດແນະນຳທາງດ້ານວິຊາການທີ່ກ່ຽວຂ້ອງ ໂດຍບໍ່ຕ້ອງພິຈາລະນາວ່າ ໂຄງການລົງທຶນ ແລະ ກິດຈະການຕ່າງໆ ດັ່ງກ່າວ ຈະຖືກຈັດຢູ່ໃນປະເພດໂຄງການໃນກຸ່ມ 1 ຫລື ກຸ່ມ 2 ຫລື ບໍ່ນອນຢູ່ໃນຢູ່ບັນຊີ ເລີຍກໍຕາມ;

5. ສຳລັບໂຄງການລົງທຶນ ແລະ ກິດຈະການຕ່າງໆ ເຖິງແມ່ນວ່າຈັດປະເພດໂຄງການ ຕົກຢູ່ໃນກຸ່ມ 1 ກໍຕາມ, ຖ້າຕົກຢູ່ໃນກໍລະນີ ເປັນໂຄງການທີ່ມີທີ່ຕັ້ງຢູ່ໃນພື້ນທີ່ມີຄວາມສຳຄັນທາງດ້ານສິ່ງແວດລ້ອມສັງຄົມ ແລະ ສິ່ງແວດລ້ອມທຳມະຊາດ ເຈົ້າຂອງໂຄງການ ຕ້ອງສ້າງ ບປຜສ ຢ່າງດຽວ ຈຶ່ງຈະໄດ້ຮັບການພິຈາລະນາ ອອກໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ ໃຫ້ໂຄງການລົງທຶນ ແລະ ກິດຈະການຕ່າງໆນັ້ນ.

ພື້ນທີ່ມີຄວາມສຳຄັນທາງດ້ານສິ່ງແວດລ້ອມສັງຄົມ ແລະ ສິ່ງແວດລ້ອມທຳມະຊາດ ກວມເອົາພື້ນທີ່ ດັ່ງລຸ່ມນີ້:

- ພື້ນທີ່ທັງໝົດ ຫລື ສ່ວນໃຫຍ່ຂອງພື້ນທີ່ ໄດ້ຖືກປະກາດເປັນປ່າປ້ອງກັນ, ປ່າສະຫງວນ ຕາມກົດໝາຍວ່າດ້ວຍປ່າໄມ້ ສະບັບເລກທີ 06/ສພຊ, ລົງວັນທີ 24 ທັນວາ 2007 ຫລື ນິຕິກຳອື່ນທີ່ປ່ຽນແທນ;
- ພື້ນທີ່ທັງໝົດ ຫລື ສ່ວນໃຫຍ່ຂອງພື້ນທີ່ ໄດ້ຖືກປະກາດເປັນ ເຂດອະນຸລັກພັນສັດນໍ້າ ແລະ ສັດປ່າ ໂດຍສອດຄ່ອງກັບກົດໝາຍວ່າດ້ວຍສັດນໍ້າ ແລະ ສັດປ່າ, ເລກທີ 07/ສພຊ, ລົງວັນທີ 24 ທັນ ວາ 2008 ຫລື ນິຕິກຳອື່ນມທີ່ປ່ຽນແທນ;
- ພື້ນທີ່ທັງໝົດ ຫລື ສ່ວນໃຫຍ່ຂອງພື້ນທີ່ ໄດ້ຖືກປະກາດເປັນ ເຂດມໍລະດົກແຫ່ງຊາດທາງດ້ານວັດທະນະທຳ ແລະ ປະຫວັດສາດ ໂດຍສອດຄ່ອງກັບກົດໝາຍວ່າດ້ວຍມໍລະດົກແຫ່ງຊາດ ເລກທີ 08/ສພຊ, ລົງວັນທີ 9 ພະຈິກ 2005 ຫລື ນິຕິກຳອື່ນທີ່ປ່ຽນແທນ ;
- ພື້ນທີ່ທັງໝົດ ຫລື ສ່ວນໃຫຍ່ຂອງພື້ນທີ່ ໄດ້ຖືກປະກາດເປັນ ແຫລ່ງນໍ້າສະຫງວນ ໂດຍສອດ ຄ່ອງກັບ ກົດໝາຍ ວ່າດ້ວຍ ນໍ້າ ແລະ ຊັບພະຍາກອນແຫລ່ງນໍ້າ ເລກທີ 02/ສພຊ, ລົງວັນທີ 11 ມັງກອນ 1996 ຫລື ນິຕິກຳອື່ນທີ່ປ່ຽນແທນ; ແລະ
- ພື້ນທີ່ອື່ນໆ ທີ່ກົດໝາຍໄດ້ປະກາດ ເປັນພື້ນທີ່ມີຄວາມສຳຄັນ ທາງດ້ານສິ່ງແວດລ້ອມສັງຄົມ ແລະ ສິ່ງແວດລ້ອມທຳມະຊາດ ໃນແຕ່ລະໄລຍະ.